ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງເຕັກໂນໂລຊີ ແລະ ການສື່ສານ

ເລກທີ 1887 /ກຕສ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2026

# ຂໍ້ຕົກລົງ

## ວ່າດ້ວຍ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

- ອີງຕາມ ກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ), ເລກທີ 05/ສພຊ, ວັນທີ 16 ພະຈິກ 2021;
- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ເຄື່ອນໄຫວ ຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ເລກທີ 625/ນຍ, ວັນທີ 22 ຕຸລາ 2021;
- ອີງຕາມ ດຳລັດວ່າດ້ວຍ ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດິຈິຕອນ, ເລກທີ 278/ລບ ,ວັນທີ 22 ພຶດສະພາ 2024;
- ອີງຕາມ ດຳລັດວ່າດ້ວຍ ມາດຕະຖານພື້ນຖານ ແລະ ມາດຕະຖານການພັດທະນາ, ເລກທີ 348/ລບ, ວັນທີ 16 ພະຈິກ 2017;
- ອີງຕາມ ໜັງສືລາຍງານ ຂອງອົງການຄົດສົມໂທລະຄົມມະນາຄົມ, ເລກທີ 788/ອຄທ, ວັນທີ 10 ກໍລະກົດ 2026.

### ລັດຖະມົນຕີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຕົກລົງ

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ເພື່ອໃຫ້ປະຊາຊົນຢູ່ໃນເຂດດັ່ງກ່າວ ສາມາດເຂົ້າເຖິງ ການບໍລິການໂທລະຄົມມະນາຄົມ, ແນໃສ່ ສົ່ງເສີມ ວຽກພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນ, ຮັບປະກັນ ໃຫ້ແກ່ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ ດິຈິຕອນ, ການສຶກສາ, ສາທາລະນະສຸກ ແລະ ລຶບລ້າງການກີກດິຈິຕອນ ຍົກລະດັບຊີວິດການເປັນຢູ່ ຂອງ ປະຊາຊົນ ໃຫ້ນັບມື້ນັບດີຂຶ້ນ, ມີຄວາມສະຫງົບ ແລະ ປອດໄພ.

**ມາດຕາ 2 ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ**

ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ແມ່ນການສະໜອງ ອຸປະກອນໂທລະຄົມມະນາຄົມ ເຊິ່ງປະກອບມີ: ລະບົບສາຍສົ່ງ, ສະຖານີ ຮັບ-ສົ່ງ ສັນຍານ, ລະບົບໄຟຫຼໍ່ລ້ຽງ ແລະ ອຸປະກອນອື່ນທີ່ກ່ຽວຂ້ອງ ໃຫ້ສາມາດເຂົ້າເຖິງການບໍລິການໂທລະຄົມມະນາຄົມ ຢູ່ໃນເຂດດັ່ງກ່າວ ໄດ້ຢ່າງສະດວກ.

ມາດຕາ 3 ອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍ ດັ່ງນີ້:

1. ການປະກອບທຶນຂອງລັດ ໝາຍເຖິງ ການນຳໃຊ້ງົບປະມານແຫ່ງລັດ, ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການທັນເປັນດີຈີຕອນ, ການປະກອບສ່ວນຈາກສັງຄົມ ແລະ ທຶນຊ່ວຍເຫຼືອທາງການ;
2. ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໝາຍເຖິງ ເຂດທີ່ມີ ພື້ນຖານເສດຖະກິດ, ພູມມີສາດ ແລະ ລະບົບພື້ນຖານໂຄງລ່າງມີຄວາມຫຍຸ້ງຫຍາກ ບໍ່ເອື້ອອຳນວຍໃຫ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ໃນການຂະຫຍາຍເຄືອຂ່າຍຂອງຕົນ ເປັນຕົ້ນ: ເຂດບໍ່ມີໄຟຟ້າ ແລະ/ຫຼື ເຂດບໍ່ມີເສັ້ນທາງທຽວໄດ້;
3. ແຜນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໝາຍເຖິງ ແຜນການທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກຳນົດ ຫຼື ຕາມການຕົກລົງຂອງລັດຖະບານໃນແຕ່ລະໄລຍະ ເພື່ອຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫຼື ເຂດທີ່ບໍ່ມີສັນຍານໂທລະຄົມມະນາຄົມ;
4. ເຂດບ້ານທີ່ຕິດພັນກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໝາຍເຖິງ ເຂດຍຸດທະສາດ ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດຊາຍແດນ, ຂອບເຂດພື້ນທີ່ພູມສັນຖານທີ່ເປັນພູຜາປ່າດົງ, ພູພຽງ, ຖ້ຳ, ຫ້ວຍນ້ຳລຳເຊ ທີ່ມີຄຸນຄ່າທາງການທະຫານ, ເປັນເຂດຕ້ອງໄດ້ສະຫງວນຢ່າງເດັດຂາດ ເພື່ອນຳໃຊ້ເຂົ້າໃນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.

ມາດຕາ 4 ຫຼັກການ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຕ້ອງປະຕິບັດຕາມຫຼັກການພື້ນຖານ ດັ່ງລຸ່ມນີ້:

1. ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ແຜນພັດທະນາຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
2. ຮັບປະກັນ ການຂະຫຍາຍເຄືອຂ່າຍການບໍລິການດ້ານໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກທີ່ຍັງບໍ່ມີສັນຍານ ໃຫ້ທົ່ວເຖິງ ໃນຂອບເຂດທົ່ວປະເທດ ແລະ ບໍ່ຊ້ຳຊ້ອນກັບແຜນການຂະຫຍາຍເຄືອຂ່າຍຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
3. ຮັບປະກັນ ໃຫ້ແກ່ວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
4. ຮັບປະກັນ ໃຫ້ແກ່ວຽກງານ ການສຶກສາ ແລະ ສາທາລະນະສຸກ;
5. ຮັບປະກັນ ໃຫ້ແກ່ວຽກງານ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
6. ຮັບປະກັນ ໃນການນຳໃຊ້ ແລະ ບໍລິການໂທລະຄົມມະນາຄົມ ຢ່າງທົ່ວເຖິງ;
7. ຮັບປະກັນ ຄວາມສະເໝີພາບ ແລະ ຄວາມໂປ່ງໃສ ໃນການຄັດເລືອກຜູ້ປະກອບທຶນເຂົ້າໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ;
8. ຮັບປະກັນ ສິດຜົນປະໂຫຍດ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ໂທລະຄົມມະນາຄົມ.

ມາດຕາ 5 ຂອບເຂດການນຳໃຊ້.

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຢູ່ໃນ ສປປ ລາວ.

## ໝວດທີ 2
## ການກຳນົດບູລິມະສິດ ຂອງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ການນຳໃຊ້ເຕັກໂນໂລຊີ

### ມາດຕາ 6 ການກຳນົດບູລິມະສິດ ຂອງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກຳນົດບູລິມະສິດເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໂດຍອີງໃສ່ແນວທາງນະໂຍບາຍຂອງພັກ, ແຜນພັດທະນາຂອງຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ, ໂດຍໄດ້ກຳນົດເຂດບູລິມະສິດ ດັ່ງນີ້:

1. ເຂດບ້ານທີ່ຕິດພັນກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
2. ເຂດບ້ານເປົ້າໝາຍ ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ;
3. ເຂດທີ່ບໍ່ແມ່ນເສັ້ນທາງຫຼວງແຫ່ງຊາດ;
4. ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ, ເຂດຊາຍແດນ ຫຼື ເຂດອື່ນໆ ທີ່ຍັງບໍ່ທັນມີສັນຍານໂທລະຄົມມະນາຄົມ.

### ມາດຕາ 7 ລະດັບຄວາມຫຍຸ້ງຍາກຂອງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດລະດັບຄວາມຫຍຸ້ງຍາກຂອງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກຄືດັ່ງນີ້:

1. ບໍ່ມີໄຟຟ້າ ແລະ ບໍ່ມີເສັ້ນທາງທຽວໄດ້;
2. ບໍ່ມີໄຟຟ້າ ແຕ່ມີເສັ້ນທາງທຽວໄດ້;
3. ມີໄຟຟ້າ ແຕ່ບໍ່ມີເສັ້ນທາງທຽວໄດ້;
4. ມີໄຟຟ້າ ແລະ ມີເສັ້ນທາງທຽວໄດ້.

### ມາດຕາ 8 ການພິຈາລະນາຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ

ກະຊວງເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຕາມບູລິມະສິດທີ່ກຳນົດໄວ້ໃນ ມາດຕາ 6 ແລະ ລະດັບຄວາມຫຍຸ້ງຍາກຂອງເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ທີ່ກຳນົດໄວ້ໃນ ມາດຕາ 7 ຂອງຂໍ້ຕົກລົງສະບັບນີ້.

### ມາດຕາ 9 ການສະເໜີຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງ ສະເໜີໃຫ້ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ສາມາດຍື່ນຄຳຮອງ ສະເໜີຫາ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ຂອງ ນະຄອນຫຼວງ, ແຂວງ ເພື່ອຄົ້ນຄວ້ານຳສະເໜີຫາປະທານປົກຄອງ ນະຄອນຫຼວງ, ແຂວງ ອອກຂໍ້ຕົກລົງຮັບຮອງເຂດດັ່ງກ່າວຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລ້ວຈຶ່ງນຳສົ່ງຫາ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາເອົາເຂົ້າແຜນຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.

### ມາດຕາ 10 ການນຳໃຊ້ເຕັກໂນໂລຊີ

ເຕັກໂນໂລຊີທີ່ນຳໃຊ້ໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ປະກອບມີດັ່ງນີ້:

1. ການສື່ສານເຄື່ອນທີ່ (Mobile Communication Networks);

2. ການສື່ສານຜ່ານດາວທຽມ (Satellite Communication Networks);
3. ເຄືອຂ່າຍສາຍໄຍແກ້ວນໍາແສງ (Optical Fiber Networks);
4. ການສື່ສານຜ່ານໄມໂຄເວັບ (Microwave Communication Link);
5. ນໍາໃຊ້ເຕັກໂນໂລຊີອື່ນທີ່ແທດເໝາະກັບສະພາບຕົວຈິງ.

## ໝວດທີ 3

## ແຫຼ່ງທຶນ, ຮູບແບບການປະກອບທຶນ ແລະ ນະໂຍບາຍສົ່ງເສີມ

### ມາດຕາ 11 ແຫຼ່ງທຶນ

ແຫຼ່ງທຶນທີ່ນໍາໃຊ້ເຂົ້າໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ມີດັ່ງລຸ່ມນີ້:

1. ງົບປະມານຂອງລັດຖະບານ;
2. ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ;
3. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ.

### ມາດຕາ 12 ຮູບແບບການ ລົງທຶນ ແລະ ປະກອບທຶນ

ຮູບແບບການ ລົງທຶນ ແລະ ປະກອບທຶນ ເພື່ອຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ມີດັ່ງນີ້:

1. ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ລົງທຶນ ຮ້ອຍສ່ວນຮ້ອຍ (100%);
2. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ລົງທຶນ ຮ້ອຍສ່ວນຮ້ອຍ (100%);
3. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ເຈັດສິບສ່ວນຮ້ອຍ (70%) ແລະ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ປະກອບທຶນໜ້ອຍກວ່າ ຫຼື ເທົ່າກັບ ສາມສິບສ່ວນຮ້ອຍ (30%);
4. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ຫ້າສິບສ່ວນຮ້ອຍ (50%) ແລະ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ປະກອບທຶນໜ້ອຍກວ່າ ຫຼື ເທົ່າກັບ ຫ້າສິບສ່ວນຮ້ອຍ (50%);
5. ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ສາມສິບສ່ວນຮ້ອຍ (30%) ແລະ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ປະກອບທຶນໜ້ອຍກວ່າ ຫຼື ເທົ່າກັບ ເຈັດສິບສ່ວນຮ້ອຍ (70%).

### ມາດຕາ 13 ນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ

ນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຕາມເນື້ອໃນທີ່ ກໍານົດໄວ້ໃນ ມາດຕາ 6, ມາດຕາ 7 ແລະ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຈະໄດ້ຮັບນະໂຍບາຍພິເສດ ໃຫ້ບໍລິການດ້ານໂທລະຄົມມະນາຄົມໃນເຂດດັ່ງກ່າວພຽງຜູ້ດຽວ ດັ່ງລາຍລະອຽດຄື:

1. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ລົງທຶນຮ້ອຍສ່ວນຮ້ອຍ (100%) ຈະໄດ້ຮັບນະໂຍບາຍໃຫ້ບໍລິການໃນເຂດດັ່ງກ່າວພຽງຜູ້ດຽວເປັນໄລຍະເວລາ 15 ປີ ນັບແຕ່ມື້ເປີດໃຫ້ບໍລິການຢ່າງເປັນທາງການ;
2. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ເຈັດສິບສ່ວນຮ້ອຍ (70%) ຈະໄດ້ຮັບນະໂຍບາຍໃຫ້ບໍລິການໃນເຂດດັ່ງກ່າວພຽງຜູ້ດຽວເປັນໄລຍະເວລາ 13 ປີ ນັບແຕ່ມື້ເປີດໃຫ້ບໍລິການຢ່າງເປັນທາງການ;
3. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ຫ້າສິບສ່ວນຮ້ອຍ (50%) ຈະໄດ້ຮັບນະໂຍບາຍໃຫ້ບໍລິການໃນເຂດດັ່ງກ່າວພຽງຜູ້ດຽວເປັນໄລຍະເວລາ 10 ປີ ນັບແຕ່ມື້ເປີດໃຫ້ບໍລິການຢ່າງເປັນທາງການ;
4. ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມ ປະກອບທຶນ ຫຼາຍກວ່າ ຫຼື ເທົ່າກັບ ສາມສິບສ່ວນຮ້ອຍ (30%) ຈະໄດ້ຮັບນະໂຍບາຍໃຫ້ບໍລິການໃນເຂດດັ່ງກ່າວພຽງຜູ້ດຽວເປັນໄລຍະເວລາ 08 ປີ ນັບແຕ່ມື້ເປີດໃຫ້ບໍລິການຢ່າງເປັນທາງການ.

ໃນກໍລະນີມີການສົມທົບທຶນ ຈາກ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ, ພາຍຫຼັງທີ່ໄດ້ຮັບອະນຸມັດໂຄງການຈາກ ສະພາບໍລິຫານກອງທຶນ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 12 ຂໍ້ 2 ຂອງ ດຳລັດວ່າດ້ວຍກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ, ສະບັບເລກທີ 278/ລບ, ລົງວັນທີ 22 ພຶດສະພາ 2024 ຈຶ່ງສາມາດເລີ່ມຈັດຕັ້ງປະຕິບັດໂຄງການຕາມແຜນການທີ່ກຳນົດໄວ້;

ໃນກໍລະນີ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ລົງທຶນຮ້ອຍສ່ວນຮ້ອຍ (100%) ພາຍຫຼັງສຳເລັດການຕິດຕັ້ງເຄືອຂ່າຍ ແລະ ພ້ອມໃຫ້ບໍລິການແລ້ວ ບັນດາຜູ້ໃຫ້ບໍລິການໂທ ລະຄົມມະນາຄົມ ສາມາດສະເໜີເຂົ້ານຳໃຊ້ເຄືອຂ່າຍດັ່ງກ່າວໄດ້ ໂດຍສະເໜີ ຜ່ານ ພະແນກ ເຕັກໂນໂລຊີ ແລະ ການສື່ສານ ຂອງ ນະຄອນຫຼວງ, ແຂວງ ຫາ ອົງການຄຸ້ມຄອງໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ;

ໃນກໍລະນີບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມໃດໜຶ່ງ ສະເໜີລົງທຶນກ່ອນຮ້ອຍສ່ວນຮ້ອຍ (100%) ແມ່ນຈະໄດ້ຮັບບູລິມະສິດໃນການໄລ່ລຽງ ຈາກມູນຄ່າພັນທະທີ່ຕ້ອງໄດ້ປະກອບທຶນຈາກກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ເພື່ອທົດແທນມູນຄ່າການລົງທຶນຕາມທີ່ໄດ້ຕົກລົງກັນ ກັບ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍໃຫ້ສອດຄ່ອງ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຂອງຂະແໜງການເງິນ.

ໃນກໍລະນີ ມີການປະກອບທຶນ ຫຼື ລົງທຶນ ຂອງບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມໃດໜຶ່ງ. ພາຍຫຼັງສິ້ນສຸດໄລຍະເວລາໃຫ້ນະໂຍບາຍທີ່ກຳນົດໄວ້, ບໍລິສັດຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ຈຶ່ງສາມາດຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ຢູ່ໃນເຂດດັ່ງກ່າວໄດ້.

ນອກຈາກກໍລະນີທີ່ກ່າວມາຂ້າງເທິງນີ້ ຜູ້ປະກອບທຶນ ຫຼື ຜູ້ລົງທຶນ ຍັງໄດ້ຮັບນະໂຍບາຍດ້ານພັນທະອາກອນປະເພດຕ່າງໆ ຕາມກົດໝາຍ ແລະ ນິຕິກຳ ກ່ຽວກັບສ່ວຍສາອາກອນ ທີ່ປະກາດນຳໃຊ້ໃນແຕ່ລະໄລຍະ.

**ມາດຕາ 14 ການຄັດເລືອກເອົາຜູ້ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ**

ການຄັດເລືອກເອົາຜູ້ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນຮູບແບບປະກອບທຶນທີ່ລະບຸໄວ້ໃນ ຂໍ້ 2 ຫາ 5 ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ໃຫ້ປະຕິບັດຄືດັ່ງລຸ່ມນີ້:

1. ຜ່ານຮູບແບບການປະມູນ ໃນການກໍ່ສ້າງ, ຕິດຕັ້ງ ແລະ ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ສໍາລັບແບບຟອມ ແລະ ເງື່ອນໄຂປະມູນ ແມ່ນຈະໄດ້ກໍານົດອອກມາໃນແຕ່ລະໄລຍະຕາມສະພາບຕົວຈິງ;
2. ຜູ້ທີ່ມີສິດເຂົ້າຮ່ວມປະມູນ ໃນກໍລະນີ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນລົງທຶນຮ້ອຍສ່ວນຮ້ອຍ (100%) ຕາມເນື້ອໃນ ມາດຕາ 12 ຂໍ້ 5 ຂອງຂໍ້ຕົກລົງສະບັບນີ້ ແມ່ນຜູ້ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດໂທລະຄົມມະນາຄົມ ປະເພດ ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ຜູ້ສະໜອງສິ່ງອໍານວຍຄວາມສະດວກດ້ານໂທລະຄົມມະນາຄົມ;
3. ກະຊວງເຕັກໂນໂລຊີ ແລະ ການສື່ສານ ຈະພິຈາລະນາຄັດເລືອກ ຜູ້ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ທີ່ສະເໜີຜົນປະໂຫຍດສູງສຸດກັບຄືນໃຫ້ແກ່ພາກລັດໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;
4. ໃນກໍລະນີທີ່ເລັ່ງດ່ວນ ແລະ ມີຄວາມຈໍາເປັນຕໍ່ຄວາມໝັ້ນຄົງຂອງຊາດ ທີ່ຕິດພັນກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ທີ່ມີຄວາມຈໍາເປັນ ຕ້ອງໄດ້ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ແລະ ລະບົບພື້ນຖານໂຄງລ່າງມີຄວາມຫຍຸ້ງຍາກ ຫຼື ບໍ່ມີຜູ້ສົນໃຈເຂົ້າປະມູນວຽກງານ ດັ່ງກ່າວ ແມ່ນໃຫ້ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສາມາດຈັດຊື້ໄດ້ໂດຍກົງ ຫຼື ຕົກລົງຄັດເລືອກ ຜູ້ຂະຫຍາຍເຄືອຂ່າຍໂທລະຄົມມະນາ ຄົມ ໄດ້ໂດຍກົງ ຕາມການຕົກລົງເຫັນດີຂອງລັດຖະບານ.

## ໝວດທີ 4
## ສິດ ແລະ ພັນທະ

**ມາດຕາ 15 ສິດຂອງຜູ້ໄດ້ຮັບອະນຸຍາດປະກອບທຶນ**

ຜູ້ໄດ້ຮັບອະນຸຍາດປະກອບທຶນ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ຕາມທີ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ກໍານົດໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
2. ໄດ້ຮັບການປະກອບທຶນຈາກ ພາກລັດ, ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ຕາມຄວາມເໝາະສົມ;
3. ໄດ້ຮັບການອໍານວຍຄວາມສະດວກ ຈາກລັດຖະບານໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ;
4. ນໍາໃຊ້ສິດອື່ນຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16 ພັນທະຂອງຜູ້ໄດ້ຮັບອະນຸຍາດປະກອບທຶນ**

ຜູ້ໄດ້ຮັບອະນຸຍາດປະກອບທຶນ ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ມີພັນທະ ດັ່ງນີ້:

1. ສະໜອງບໍລິການໃນເຂດດັ່ງກ່າວ, ພາຍຫຼັງ ສໍາເລັດ ການຕິດຕັ້ງ ພາຍໃນ ສາມສິບວັນ;
2. ອະນຸຍາດໃຫ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ເຂົ້ານໍາໃຊ້ໂຄງລ່າງພື້ນຖານ ຫຼື ບໍລິການ ໃນເຂດດັ່ງກ່າວ ພາຍໃນ ສິບຫ້າ ວັນລັດຖະການ ຫຼັງຈາກ ສິ້ນສຸດໄລຍະເວລາທີ່ໄດ້ຮັບນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ຕາມທີ່ໄດ້ລະບຸໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;

3. ປະຕິບັດໂຄງການໃຫ້ສຳເລັດຕາມໄລຍະເວລາທີ່ກຳນົດ;
4. ປະກອບສ່ວນ ໃນການບຳລຸງຮັກສາ ແລະ ປ່ຽນຖ່າຍອຸປະກອນ ທີ່ນຳໃຊ້ໃນເຂດດັ່ງກ່າວ;
5. ສະຫຼຸບ, ລາຍງານຜົນການຂະຫຍາຍເຄືອຂ່າຍ ແລະ ໃຫ້ບໍລິການໂທລະຄົມມະນາຄົມ ແກ່ ອົງການຄຸ້ມຄອງ... ກອງທຶນໂທລະຄົມມະນາຄົມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຊາບ ເປັນແຕ່ລະໄລຍະ;
6. ປະຕິບັດພັນທະອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 17 ສິດຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ສິດຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີດັ່ງນີ້:

1. ສະເໜີເຂົ້າໃຊ້ພື້ນຖານໂຄງລ່າງ ຫຼື ໃຫ້ບໍລິການ ໃນເຂດບໍ່ມີສັນຍານໂທລະຄົມມະນາຄົມ ພາຍຫຼັງ ທີ່ສິ້ນສຸດໄລຍະເວລາ ໄດ້ຮັບນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ຕາມທີ່ລະບຸໄວ້ໃນ ມາດຕາ 13 ຂອງຂໍ້ຕົກລົງສະບັບນີ້;
2. ສະເໜີຂໍຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫຼື ໃນເຂດບໍ່ມີສັນຍານໂທລະຄົມມະນາຄົມ ຕາມແຜນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ທີ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກຳນົດໃນແຕ່ລະໄລຍະ;
3. ສະເໜີ ຂໍການສົມທົບທຶນຈາກ ລັດຖະບານ ຫຼື ກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການຫັນເປັນດີຈີຕອນ ໃນການຂະຫຍາຍເຄືອຂ່າຍ ຫຼື ບໍລິການ ຕາມອັດຕາສ່ວນທີ່ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້;
4. ນຳໃຊ້ສິດອື່ນຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 18 ພັນທະຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີພັນທະ ດັ່ງນີ້:

1. ໃຫ້ ຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ ເຊື່ອມຕໍ່ ຫຼື ນຳໃຊ້ໂຄ່ງລາງພື້ນຖານໂທລະຄົມມະນາຄົມ ຕາມແຜນຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫຼື ໃນເຂດບໍ່ມີສັນຍານໂທລະຄົມມະນາຄົມ;
2. ຮັບປະກັນ ລະບົບເຕັກນິກຂອງຕົນ ໃຫ້ສາມາດເຊື່ອມຕໍ່ ເຂົ້າກັບລະບົບເຕັກນິກຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;
3. ແກ້ໄຂຜົນກະທົບ ແລະ ທົດແທນຄວາມເສຍຫາຍທີ່ເກີດຈາກການໃຫ້ບໍລິການຂອງຕົນ;
4. ລາຍງານການເຄື່ອນໄຫວ ແລະ ແຜນການເຄື່ອນໄຫວດຳເນີນທຸລະກິດຮອບດ້ານເປັນປະຈຳເດືອນ, ໄຕມາດ ແລະ ປີ ຕໍ່ ຂະແໜງ ເຕັກໂນໂລຊີ ແລະ ການສື່ສານ ແລະ ຂະແໜງການທີ່ກ່ຽວຂ້ອງ ຢ່າງເປັນປົກກະຕິ;
5. ເປີດເຜີຍຂໍ້ມູນລາຍລະອຽດໃຫ້ຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນຮັບຊາບ ຫຼັງຈາກສິ້ນສຸດໄລຍະເວລາ ທີ່ໄດ້ຮັບນະໂຍບາຍສົ່ງເສີມການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫຼື ໃນເຂດບໍ່ມີສັນຍານໂທລະຄົມມະນາຄົມ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 19 ສິດຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີສິດ ດັ່ງນີ້:

1. ໄດ້ຮັບການບໍລິການຢ່າງທົ່ວເຖິງ, ໂປ່ງໃສ, ຍຸຕິທຳ ແລະ ຊົມໃຊ້ໃນອັດຕາຄ່າບໍລິການທີ່ມີການດັດສົມຈາກລັດຖະບານ;
2. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 20 ພັນທະຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການ ມີພັນທະ ດັ່ງນີ້:

1. ປົກປັກຮັກສາ ອຸປະກອນໂທລະຄົມມະນາຄົມ ທີ່ນຳໄປຕິດຕັ້ງ, ແຈ້ງຕໍ່ອຳນາດການປົກຄອງທ້ອງຖິ່ນໃນກໍລະນີ ພົບເຫັນການທຳລາຍ, ມ້າງເພ, ລັກລອບນຳໃຊ້ ອຸປະກອນໂທລະຄົມມະນາຄົມ;
2. ປະກອບສ່ວນ ອຳນວຍຄວາມສະດວກໃຫ້ແກ່ວຽກງານການຂະຫຍາຍເຄືອຂ່າຍ ໂທລະຄົມມະນາຄົມໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫຼື ເຂດບໍ່ມີສັນຍາໂທລະຄົມມະນາຄົມ ທີ່ຕົນອາໃສຢູ່;
3. ປະກອບສ່ວນບຳລຸງຮັກສາຄວາມສະອາດສະຖານທີ່ຕິດຕັ້ງສະຖານີຮັບ-ສົ່ງສັນຍານ ໂທລະຄົມມະນາຄົມເປັນແຕ່ລະໄລຍະ;
4. ປະຕິບັດຕາມເງື່ອນໄຂຂອງສັນຍານຳໃຊ້ບໍລິການໂທລະຄົມມະນາຄົມ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
5. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 21 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ ຫຼື ນິຕິບຸກຄົນ ມີ ພຶດຕິກຳ ດັ່ງນີ້:

1. ມີພຶດຕິກຳ ທຳລາຍ ຫຼື ສ້າງຄວາມເສຍຫາຍຕໍ່ລະບົບອຸປະກອນໂທລະຄົມມະນາຄົມ ຂອງບຸກຄົນ ຫຼື ຜູ້ໃຫ້ບໍລິການໂທລະຄົມມະນາຄົມ;
2. ລັກລອບນຳໃຊ້ເຄືອຂ່າຍໂທລະຄົມມະນາຄົມ ໂດຍທີ່ບໍ່ໄດ້ຮັບອະນຸຍາດ;
3. ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ ຫຼື ເຈົ້າໜ້າທີ່ຂອງອົງການຄຸ້ມຄອງ ແລະ ກວດກາວຽກງານການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ;
4. ມີພຶດຕິກຳອື່ນທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 22 ຂໍ້ຫ້າມສຳລັບຜູ້ທີ່ໄດ້ຮັບອະນຸຍາດປະກອບທຶນ**

ຫ້າມ ຜູ້ທີ່ໄດ້ຮັບອະນຸຍາດປະກອບທຶນ ມີພຶດຕິກຳ ດັ່ງນີ້:

1. ຍົກເລີກສັນຍາປະກອບທຶນ ໂດຍບໍ່ໄດ້ຮັບການເຫັນດີຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ອ່າຍທຶນໄປນຳໃຊ້ການພັດທະນາເຂດບໍ່ມີສັນຍານໂທລະຄົມມະນາຄົມອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ;
3. ໂອນສັນຍາປະກອບທຶນ ໃຫ້ພາກສ່ວນອື່ນໄປດຳເນີນການຕໍ່ໂດຍບໍ່ໄດ້ຮັບອະນຸຍາດ;
4. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດ ຕາມທີ່ກຳນົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 6
## ອົງການຄຸ້ມຄອງວຽກງານການຂະຫຍາຍເຄືອຂ່າຍ ໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ

**ມາດຕາ 23 ອົງການຄຸ້ມຄອງ ແລະ ກວດກາ ວຽກງານການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ຄຸ້ມຄອງ ແລະ ກວດກາ ການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ, ໂດຍມອບໃຫ້ ອົງການດັດສົມໂທລະຄົມມະນາຄົມ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບທຸກພາກ ສ່ວນທີ່ກ່ຽວຂ້ອງ.

**ມາດຕາ 24 ສິດ ແລະ ໜ້າທີ່ ຂອງອົງການດັດສົມໂທລະຄົມມະນາຄົມ**

ອົງການດັດສົມໂທລະຄົມມະນາຄົມ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ, ການຈັດຕັ້ງປະຕິບັດການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນຂອບເຂດທົ່ວປະເທດ;
2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນການ ໃຫ້ບັນດາພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ;
3. ສະເໜີ ແຜນຂະຫຍາຍເຄືອຂ່າຍໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫາ ຄະນະນໍາ ກະຊວງເຕັກໂນໂລຊີ ແລະ ການສື່ສານ ພິຈາລະນາຮັບຮອງໃນແຕ່ລະໄລຍະ;
4. ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃຫ້ຄະນະນໍາ ກະຊວງເຕັກໂນໂລຊີ ແລະ ການສື່ສານ ໃນແຕ່ລະໄລຍະ;
5. ສະເໜີໂຄງການ, ຢັ້ງຢືນແຜນຂໍເບີກຈ່າຍງົບປະມານ ປະກອບທຶນໃນການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ຫາ ລັດຖະບານ ຫຼື ຫ້ອງການກອງທຶນພັດທະນາໂທລະຄົມມະນາຄົມ ແລະ ການທັນເປັນດິຈິຕອນ ເພື່ອສັງລວມສະເໜີພາກສ່ວນທີ່ກ່ຽວຂ້ອງພິຈາລະນາຮັບຮອງໂຄງການ ແລະ ຊໍາລະມູນຄ່າໂຄງການ ໃນແຕ່ລະໄລຍະຕາມລະບຽບການ;
6. ໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 25 ສິດ ແລະ ໜ້າທີ່ ຂອງພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງ, ແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຕິດຕາມ, ກວດກາ, ການຈັດຕັ້ງປະຕິບັດການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນຂອບເຂດທີ່ຕົນຮັບຜິດຊອບ;
2. ເຜີຍແຜ່ ນະໂຍບາຍ, ຍຸດທະສາດ, ກົດໝາຍ, ລະບຽບການ ແລະ ແຜນການ ທີ່ຕິດພັນ ໃຫ້ສາຂາບໍລິສັດໂທລະຄົມມະນາຄົມ, ຊຸມຊົນ ແລະ ສັງຄົມ ຮັບຮູ້;
3. ອໍານວຍຄວາມສະດວກ ປະສານສົມທົບກັບ ອົງການຈັດຕັ້ງທ້ອງຖິ່ນໃນ ວຽກງານທີ່ກ່ຽວຂ້ອງ;
4. ເກັບກໍາຂໍ້ມູນສະຖິຕິບ້ານທີ່ຢູ່ໃນເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ທີ່ຍັງບໍ່ທັນມີສັນຍານໂທລະຄົມມະນາຄົມ ຫຼື ຕ້ອງປັບປຸງຄຸນນະພາບການບໍລິການໂທລະມະນາຄົມ ເພື່ອສະເໜີຂັ້ນເທິງ ພິຈາລະນາ

ຮັບຮອງຂົ້ນແຜນ ຂະຫຍາຍສັນຍານ ຫຼື ປັບປຸງຄຸນນະພາບການບໍລິການໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ ໃນແຕ່ລະໄລຍະ;

5. ສະຫຼຸບ ແລະ ລາຍງານ ສະພາບການຈັດຕັ້ງປະຕິບັດວຽກງານຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ຕໍ່ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຢ່າງເປັນປົກກະຕິ;
6. ໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 26 ສິດ ແລະ ໜ້າທີ່ ຂອງ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ**

ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ໃນການຮ່ວມມື, ອຳນວຍຄວາມສະດວກ ແລະ ປະສານສົມທົບ ກັບ ຂະແໜງການ ເຕັກໂນໂລຊີ ແລະ ການສື່ສານ ເພື່ອຊຸກຍູ້ ແລະ ສົ່ງເສີມວຽກງານການຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມ ໄປສູ່ເຂດຊົນນະບົດ ແລະ ຫ່າງໄກສອກຫຼີກ.

## ໝວດທີ 7
## ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການ ຕໍ່ຜູ້ລະເມີດ

**ມາດຕາ 27 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນການປະກອບທຶນຂະຫຍາຍເຄືອຂ່າຍ, ຜະລິດອຸປະກອນ ແລະ ບໍລິການ ໂທລະຄົມມະນາຄົມ ຢ່າງມີປະສິດທິຜົນ, ມີຄວາມກ້າວໜ້າ, ທັນສະໄໝ, ມີຄຸນນະພາບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 28 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ລະເມີດກົດໝາຍ ແລະ ຂໍ້ຕົກລົງສະບັບນີ້ ຈະຖືກ ກ່າວເຕືອນ, ສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 29 ການຈັດຕັ້ງປະຕິບັດ**

ມອບໃຫ້ອົງການດັດສົມໂທລະຄົມມະນາຄົມ ເປັນເຈົ້າການປະສານສົມທົບກັບທຸກພາກສ່ວນທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 30 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ລັດຖະມົນຕີ

ສັນຕິສຸກ ສິມມາລາວົງ